# ບົດຂ່າວ

Empowered lives.
Resilient nations.

**ໃນຂະນະທີ່ ສປປ ລາວ**
**ກຳລັງກະກຽມຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ,**
**ຄວາມບໍ່ສະເໝີພາບ ເປັນບັນຫາໜຶ່ງທີ່ຕ້ອງກ້າວຜ່ານໃຫ້ໄດ້**

*ບົດລາຍງານຄວາມຄືບໜ້າດ້ານສະຖິຕິປະຈຳປີ ຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ຊີ້ໃຫ້ເຫັນເຖິງສິ່ງທ້າທາຍ ແລະ ຜົນສຳເລັດຕ່າງໆ*

**ນະຄອນຫຼວງວຽງຈັນ, 29 ຕຸລາ 2018 -** ໃນບົດລາຍງານດ້ານສະຖິຕິຫຼ້າສຸດຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ກ່ຽວກັບດັດສະນີ ແລະ ຕົວຊີ້ວັດຂອງການພັດທະນາມະນຸດ ທີ່ເຜີຍແຜ່ບໍ່ດົນມານີ້, ສປປ ລາວ ກຳລັງສືບຕໍ່ກ້າວສູ່ເສັ້ນທາງແຫ່ງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ ໃນປີ 2024. ອີງໃສ່ບົດລາຍງານດັ່ງກ່າວ, ຕົວເລກດັດສະນີການພັດທະນາມະນຸດ ຂອງ ສປປ ລາວ ເຊິ່ງຄິດໄລ່ຕາມອາຍຸຍືນສະເລ່ຍ, ລະດັບການສຶກສາ ແລະ ຍອດລາຍຮັບຕໍ່ຫົວຄົນຂອງຄົນໃນປະເທດ ໄດ້ເພີ່ມຂຶ້ນຫຼາຍກວ່າ 50 ສ່ວນຮ້ອຍນັບແຕ່ປີ 1990 ເປັນຕົ້ນມາ. ໃນປີ 2017, ອາຍຸຍືນສະເລ່ຍ ຂອງ ສປປ ລາວ ໄດ້ບັນລຸ 67 ປີ ໃນຂະນະທີ່ຍອດລາຍຮັບແຫ່ງຊາດຕໍ່ຫົວຄົນທີ່ມີການລາຍງານໃນປີ 2018 ແມ່ນ 1996 ໂດລາສະຫະລັດ.

ເພື່ອແນໃສ່ຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ, ສປປ ລາວ ຕ້ອງໄດ້ຜ່ານສອງໃນສາມເກນມາດຕະຖານ. ຍອດລາຍຮັບແຫ່ງຊາດຕໍ່ຫົວຄົນ ແລະ ດັດສະນີຊັບສິນມະນຸດ ໄດ້ບັນລຸຕາມເງື່ອນໄຂແລ້ວ, ໃນຂະນະທີ່ດັດສະນີຄວາມອ່ອນໄຫວທາງດ້ານເສດຖະກິດ ຍັງຕ້ອງໄດ້ເຮັດໃຫ້ບັນລຸ. ຄວາມຢືດຢຸ່ນທີ່ຕໍ່າຕໍ່ແຮງກົດດັນ ແລະ ຄວາມບໍ່ມີສະຖຽນລະພາບທາງດ້ານເສດຖະກິດຂອງ ສປປ ລາວ ຍັງໜ້າເປັນຫ່ວງ, ໂດຍສະເພາະໃນໄລຍະເວລາທີ່ຫຼາຍພື້ນທີ່ຂອງປະເທດກຳລັງໄດ້ຮັບຜົນກະທົບຮ້າຍແຮງຈາກໄພນ້ຳຖ້ວມ.

ທ່ານ ບາລາຊູບຣາມານຽມ ມູຣາລີ, ຮອງຜູ້ຕາງໜ້າອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ກ່າວມີຄຳເຫັນວ່າ "ຄວາມສ່ຽງທີ່ຈະເກີດເຫດການບໍ່ຄາດຝັນ ຄືດັ່ງໄພພິບັດທາງທຳມະຊາດທີ່ສົ່ງຜົນກະທົບຕໍ່ໝາກຜົນ ຂອງການພັດທະນາໃນປະຈຸບັນ ແມ່ນຍັງມີສູງ. ເລື່ອງນີ້ຍັງກ່ຽວຂ້ອງກັບປະເທດທີ່ມີເສດຖະກິດຂະຫຍາຍຕົວສູງ ຄືດັ່ງ ສປປ ລາວ".

ໂດຍອີງຕາມສະຖິຕິຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ, ຄວາມບໍ່ສະເໝີພາບ ຍັງຄົງເປັນໜຶ່ງໃນສິ່ງທ້າທາຍທີ່ໃຫຍ່ຫຼວງ ໃນ ສປປ ລາວ. ເມື່ອຕົວເລກດັດສະນີການພັດທະນາມະນຸດຂອງ ສປປ ລາວ ໄດ້ມີການດັດປັບສຳລັບຄວາມບໍ່ສະເໝີພາບ, ຕົວເລກດັ່ງກ່າວຫຼຸດລົງຫຼາຍກວ່າ 26%. ຕົວເລກຫຼຸດລົງສະເລ່ຍສຳລັບປະເທດອື່ນໆໃນພາກພື້ນ ແມ່ນສູງກວ່າ 15% ເລັກໜ້ອຍ. ຄວາມບໍ່ສະເໝີພາບທີ່ສູງ ເປັນສິ່ງທີ່ໜ້າເປັນຫ່ວງໂດຍສະເພາະໃນສະຖານະການທີ່ເກີດມີໄພພິບັດ ເນື່ອງຈາກວ່າປະຊາຊົນທີ່ມີລາຍຮັບຕໍ່າ ແລະ ມີຄວາມຫຍຸ້ງຍາກໃນການເຂົ້າເຖິງການບໍລິການ ຕ້ອງໄດ້ຕໍ່ສູ້ຢ່າງໜັກເພື່ອຟື້ນຟູຊີວິດການເປັນຢູ່ຂອງພວກເຂົາ.

ທ່ານ ປອ. ກິແກ້ວ ຈັນທະບູລີ, ຮອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ເຊື່ອໝັ້ນວ່າ ຂໍ້ມູນທີ່ເນັ້ນໃສ່ບໍ່ພຽງແຕ່ຕົວເລກທາງດ້ານເສດຖະກິດ ເປັນສິ່ງທີ່ມີຄວາມສຳຄັນ ສຳລັບການພັດທະນາແບບຍືນຍົງ ແລະ ເທົ່າທຽມ: "ການວິເຄາະ ແລະ ການລວບລວມຂໍ້ມູນການພັດທະນາມະນຸດຂອງອົງການສະຫະປະຊາຊາດ ເພື່ອການພັດທະນາ ຊ່ວຍໃຫ້ພວກເຮົາຄາດຄະເນ ແລະ ວາງແຜນການອະນາຄົດໄດ້ດີຂຶ້ນ ໂດຍສະເພາະ ແມ່ນເວົ້າເລື່ອງຄຸນນະພາບຂອງການພັດທະນາ. ຖ້າ ສປປ ລາວ ຕ້ອງການທີ່ຈະຫຼີກລ່ຽງບັນຫາທີ່ປະເທດທີ່ມີລາຍຮັບປານກາງປະເຊີນຢູ່, ພວກເຮົາຕ້ອງຫາລາຍຮັບຈາກຫຼາຍຊ່ອງທາງ ເພື່ອການເຕີບໂຕ, ອອກແບບຍຸດທະສາດສຳລັບການຫັນປ່ຽນເສດຖະກິດຢ່າງຖືກຕ້ອງແຕ່ຫົວທີ ແລະ ລົງທຶນໃສ່ການຫັນປ່ຽນລະບົບການສຶກສາ ແລະ ສາທາລະນະສຸກ ໄປໃນທິດທາງທີ່ຊ່ວຍໃຫ້ກຳລັງແຮງງານ ແລະ ປະຊາກອນທັງໝົດຕ້ອງໄດ້ປັບຕົວຢ່າງຕໍ່ເນື່ອງ. ໂດຍສະເພາະ, ການຫຼຸດພົ້ນອອກຈາກສະຖານະພາບປະເທດ ດ້ອຍພັດທະນາຈະເກີດຂຶ້ນໄດ້ ໂດຍການປັບປຸງລະດັບການສຶກສາຂອງປະຊາຊົນພວກເຮົາ ຜູ້ທີ່ແຂງແຮງ, ດຳລົງຊີວິດແບບມີຄວາມຍືນຍົງ ແລະ ມີຫົວຄິດປະດິດສ້າງທີ່ເປັນປະໂຫຍດຕໍ່ຂະບວນການສ້າງນະວັດຕະກຳ ແລະ ການເຕີບໂຕທາງດ້ານເສດຖະກິດແບບກວມລວມ". ປະຈຸບັນນີ້, ຄວາມບໍ່ສະເໝີພາບທາງດ້ານການສຶກສາໃນ ສປປ ລາວ ແມ່ນຢູ່ທີ່ 34%, ເຊິ່ງໃກ້ກັບຕົວເລກສະເລ່ຍໃນທົ່ວໂລກ ສຳລັບປະເທດດ້ອຍພັດທະນາ.

ຄຽງຄູ່ໄປກັບໂລກທີ່ກຳລັງພັດທະນາ, ສປປ ລາວ ມີຄວາມກ້າວໜ້າໃນເກືອບທຸກໝວດໝູ່ຂອງ ການພັດທະນາມະນຸດຕະຫຼອດສາມທົດສະວັດທີ່ຜ່ານມາ. ຄວາມແຕກຕ່າງດ້ານໂອກາດ, ຄວາມສຳເລັດ ແລະ ການສ້າງຂີດ ຄວາມສາມາດ ເປັນແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ສະເໝີພາບ ໃນຫຼາຍໆປະເທດທີ່ກຳລັງພັດທະນາ. ຂະບວນການໃນການຫຼຸດພົ້ນອອກຈາກ ສະຖານະພາບປະເທດດ້ອຍພັດທະນາ ຂອງ ສປປ ລາວຈະໄດ້ຮັບການເສີມສ້າງຄວາມເຂັ້ມແຂງຂຶ້ນເລື້ອຍໆ ເມື່ອການເຕີບໂຕທາງດ້ານເສດຖະກິດ ໄດ້ຮັບແຮງຊຸກຍູ້ຈາກການຊ່ວຍເຫຼືອການພັດທະນາມະນຸດທີ່ມີຄຸນນະພາບສູງ.